## ສາສນາ ອິສລາມ:

## 1/ ຄວາມເປັນມາ:

- ສາສນາອິສລາມ ໄດ້ເກີດຈາກຊາຍຜູ້ນຶ່ງຊື່ ມູຮັມເມັດ (Muhammad) ໃນດິນແດນອາຣັບ. ທ່ານມູຮາເມັດ ໄດ້ເປັນເຊື້ອສາຍຂອງ ອິສມາເອນ ຊຶ່ງເປັນລູກຊາຍຂອງທ່ານ ອັບຣາຮາມໂດຍທາງເມັຽນ້ອຍຊື່ວ່າ ນາງຮາກາ. ຍ້ອນເປັນເຊື້ອສາຍຂອງອັບຣາຮາມນີ້ເອງ ສາສນານີ້ຈຶ່ງມີການພົວພັນກັບສາສນາຄຣິສຕຽນ.

**ປະຖົມມະການ 16:1-12** "ນາງຊາຣາຍເມັຽອັບຣາມບໍ່ເຄີຍມີລູກ ແຕ່ນາງມີສາວໃຊ້ເອຢິບຜູ້ນຶ່ງຊື່ວ່າຮາກາ ຊາຣາຍຈຶ່ງເວົ້າຕໍ່ອັບຣາມວ່າ "ເບິ່ງດູ, ຈົນເຖິງດຽວນີ້ພຣະຜູ້ເປັນເຈົ້າບໍ່ໄດ້ໃຫ້ຂ້ອຍມີລູກ ເປັນຫຍັງເຈົ້າຈຶ່ງບໍ່ສົມສູ່ຮ່ວມກັບສາວໃຊ້ຂອງຂ້ອຍ? ບາງທີນາງຈະມີລູກໃຫ້ຂ້ອຍກໍໄດ້" ດັ່ງນັ້ນອັບຣາມກໍເຮັດຕາມ ຊາຣາຍຈຶ່ງມອບນາງຮາກາສາວໃຊ້ຊາວເອຢິບໃຫ້ເປັນເມັຽນ້ອຍຜົວແຫ່ງຕົນ ເຫດການນີ້ມີຂຶ້ນຫລັງຈາກອັບຣາມໄດ້ອາສັຍຢູ່ໃນປະເທດ ການາອານເປັນເວລາສິບປີແລ້ວ ຄັນອັບຣາມໄດ້ຢູ່ຮ່ວມກັບນາງຮາກາແລ້ວ ນາງກໍເລີຍຕັ້ງທ້ອງ ເມື່ອນາງຮາກາຮູ້ວ່ານາງມີທ້ອງຈຶ່ງເກີດມີຄວາມຈອງຫອງດູຖູກຢຽດຫຍາມນາງຊາຣາຍ ຄັນແລ້ວ ຊາຣາຍຈຶ່ງເວົ້າກັບອັບຣາມວ່າ "ມັນເປັນຄວາມຜິດຂອງເຈົ້າທີ່ນາງຮາກາດູຖູກຢຽດຫຍາມຂ້ອຍ ຂ້ອຍໄດ້ເອົາສາວໃຊ້ຂອງຂ້ອຍໃຫ້ເປັນເມັຽເຈົ້າ ແຕ່ເມື່ອມັນຮູ້ວ່າມັນມີທ້ອງແລ້ວກໍດູຖູກຢຽດຫຍາມຂ້ອຍ ຂໍພຣະຜູ້ເປັນເຈົ້າຕັດສິນເອງເຖີດວ່າໃນລະຫວ່າງຂ້ອຍກັບເຈົ້າແມ່ນຜູ້ໃດຖືກແລະແມ່ນຜູ້ໃດຜິດ" ອັບຣາມຈຶ່ງຕອບເມັຽວ່າ "ດີແລ້ວ ຈົ່ງເຂົ້າໃຈວ່ານາງຮາກາຍັງເປັນສາວໃຊ້ຂອງເຈົ້າຢູ່ແລະຍັງຢູ່ໃຕ້ຄວາມຄູ້ມຄອງຂອງເຈົ້າຈົ່ງກະທຳກັບນາງຕາມທີ່ເຈົ້າເຫັນສົມຄວນເຖີດ" ດັ່ງນັ້ນ ນາງຊາຣາຍຈຶ່ງຂົ່ມເຫັງນາງຮາກາຈົນນາງໄດ້ປົບຫນີໄປ. ທູດຂອງພຣະຜູ້ເປັນເຈົ້າ ພົບນາງໃກ້ໆກັບບໍ່ນ້ຳໃນຖິ່ນກັນດານທ່ງໄປເມືອງຊູເຣ ຈຶ່ງຖາມນາງວ່າ "ສາວໃຊ້ນາງຊາຣາຍເຈົ້າມາແຕ່ໃສ? ແລະເຈົ້າຈະໄປໃສ? ນາງຕອບວ່າ "ຂ້ານ້ອຍກຳລັງປົບຫນີ ຈາກນາງຊາຣາຍ" ທູດພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ "ຈົ່ງກັບຄືນເມືອຫານາຍຍິງຂອງເຈົ້າ ແລະຍອມຖ່ອມຕົວລົງຢູ່ໃຕ້ການຄູ້ມຄອງຂອງທ່ານເຖີດ" ທູດອົງນັ້ນເວົ້າຕໍ່ໄປອີກວ່າ: "ເຮົາຈະໃຫ້ເຊື້ອສາຍຂອງເຈົ້າທະວີຫລາຍຂຶ້ນ ຈົນບໍ່ມີໃຜສາມາດນັບໄດ້ ເຈົ້າກຳລັງຈະມີລູກຊາຍຢູ່ແລ້ວ ຊຶ່ງເຈົ້າຈະໃສ່ຊື່ວ່າ ອິຊມາເອນ ເພາະວ່າພຣະຜູ້ເປັນເຈົ້າຊົງໄດ້ຍິນຄຳຮ້ອງທຸກຂອງເຈົ້າ ແຕ່ລູກຊາຍເຈົ້າຈະເປັນເຫມືອນລໍປ່າ ລາວຈະຕໍ່ສູ້ກັບຫມົດທຸກຄົນ ແລະທຸກໆຄົນກໍຈະຕໍ່ສູ້ລາວ ລາວຈະຢູ່ໂດຍປາດສະຈາກຍາດພີ່ນ້ອງ"

- ຜູ້ທີ່ເຊື່ອໃນສາສນາອິສລາມນີ້ເອີ້ນວ່າ "ມຸສລິມ". ພວກເຂົາໄດ້ເຂົ້າໃຈວ່າເທວະດາ ຄັບຣິເອນ ຊຶ່ງເປັນທູດສວັນຂອງພຣະເຈົ້າໄດ້ມາພົບກັບທ່ານ ມູຮັມເມັດທີ່ພູເຂົາ ໄຮຣາ (Hira) ໃກ້ກັບເມືອງເມັກກາ (Mecca) ໃນປີ 610 AD ແລະໄດ້ສະແດງເຈຕນາຣົມຂອງພຣະເຈົ້າໃຫ້ເພິ່ນຮູ້. ປາກົດການນີ້ໄດ້ຖືກບັນທຶກໄວ້ເປັນປຶ້ມຄຳພີເອີ້ນວ່າ "ຄໍຣານ" (Koran or Quran).

## 2/ ລະບົບການນັບຖື:

- ກ່ອນຫນ້ານີ້ ຊົນເຜົ່າອາຣັບໄດ້ນັບຖືຮູບເຄົາຣົບ. ທີ່ໂບດໃຫຍ່ໃນເມືອງເມັກກາ ໄດ້ມີຮູບເຄົາຣົບທີ່ປະຊາຊົນຂາບໄຫວ້ເຖິງ 365 ຮູບ. ຊຶ່ງແຕ່ລະຮູບນັ້ນເຊື່ອກັນວ່າ ເປັນພຣະເຈົ້າຜູ້ຮັບຜິດຊອບແຕ່ລະວັນໄປ. ຫລັງຈາກທ່ານ ມູຮາເມັດໄດ້ຄົ້ນຄວ້າຂຽນຄຳພີຄໍຣານແລ້ວ ກໍໄດ້ຕັ້ງສານາອິສລາມຂຶ້ນ ເພາະເຫັນວ່າການນັບຖືຮູບເຄົາຣົບຫລາຍອັນນັ້ນເປັນການຫລ້າສະມັຍ. ການປະຕິບັດໃນການຂາບໄຫວ້ບູຊາໄດ້ມີການປ່ຽນແປງ. ຄືພວກມຸສລິມໄດ້ມີການນັບຖືລະບົບພຣະເຈົ້າອົງດຽວ ຊຶ່ງເອີ້ນຊື່ວ່າ "ອັລລາ" (Allah)D ຊາວມຸສລິມເຊື່ອກັນກັນວ່າ ທ່ານມູຮາເມັດ ແມ່ນຜູ້ທີ່ມາຈາກພຣະເຈົ້າ ຊຶ່ງພຣະອົງໄດ້ຊົງໃຫ້ທ່ານມາ ເພື່ອເປີດເຜີຍຄວາມຈິງຂອງພຣະອົງແກ່ມະນຸດ.

- ຫລັກຄວາມເຊື່ອຂອງເຂົາເອີ້ນວ່າ "ຊາຮາດາ" (Shahada) ໂດຍມີການສະລຸບໄວ້ດັ່ງນີ້: La illaha ila Allah, wa Muhammadun rasul Allah. (ລາ ອິລລາຮາ ອິລາ ອັລລາ, ວາ ມູຮັມມາດັນ ຣາຊຸນ ອັລລາ) ແປວ່າດັ່ງນີ້: "ບໍ່ມີພຣະເຈົ້າອື່ນອີກ ແຕ່ມີພຽງອົງດຽວ ແລະມູຮັມເມັດ ເປັນຜູ້ສົ່ງຂ່າວທີ່ມາຈາກພຣະເຈົ້າ" ທຸກຄົນທີ່ເປັນມຸສລິມຈະຕ້ອງທ່ອງຈຳຄຳເວົ້າປະໂຍກນີ້ໃຫ້ໄດ້. ລະບົບການນັບຖືຂອງພວກນີ້ໄດ້ມີການຮຽກຮ້ອງຄວາມເຫັນໃຈຕ່າງໆຈາກພວກອັລລາ ແຕ່ພວກນີ້ໄດ້ມີລະບົບການນັບຖືຜູ້ນຳຢ່າງເຄັ່ງຄັດ ຜູ້ນຳອາດເປັນລອງຈາກພຣະເຈົ້າ.

## 3/ ການຂະຫຍາຍຕົວຂອງອິສລາມ:

- ໃນສາຍຕາຂອງຊາວມຸສລິມແລ້ວ ຖືວ່າທ່ານມູຮັມເມັດເປັນຜູ້ມີສະຕິປັນຍາສູງສຸດຊຶ່ງທ່ານເອງເປັນຜູ້ທີ່ພວກຜູ້ທຳນວາຍໃນສະໄຫມເດີມໄດ້ກ່າວເອົາໄວ້. ເປັນຜູ້ສຸດທ້າຍທີ່ຍິ່ງໃຫຍ່ຕໍ່ມາຈາກ ອາດາມ, ໂນອາ, ອັບຣາຮາມ, ໂມເຊ, ແລະພຣະເຢຊູຄຣິດ. ພວກເຂົາຖືວ່າ ມູຮາເມັດ ແມ່ນຜູ້ທີ່ພຣະຄຳພີຂອງຊາວຄຣິສຕຽນໄດ້ກ່າວເຖິງໃນ

**ໂຢຮັນ 16: 7,13** " ຢ່າງໃດກໍຕາມ, ເຮົາກໍບອກຄວາມຈິງຕໍ່ທ່ານທັງຫລາຍວ່າ ການທີ່ເຮົາຈາກໄປນັ້ນເປັນປໂຍດແກ່ພວກທ່ານ ເພາະຖ້າເຮົາບໍ່ໄປ ອົງພຣະຜູ້ຊ່ອຍນັ້ນຈະບໍ່ໄດ້ສະເດັດມາຫາພວກທ່ານ ແຕ່ຖ້າເຮົາໄປແລ້ວ ເຮົາກໍຈະໃຊ້ພຣະອົງນັ້ນມາຫາພວກທ່ານ. ແຕ່ເມື່ອພຣະອົງນັ້ນຄືພຣະວິນຍານແຫ່ງຄວາມຈິງຈະສະເດັດມາແລ້ວ ພຣະອົງຈະນຳທ່ານທັງຫລາຍໄປສູ່ຄວາມຈິງທັງຫມົດ ເພາະພຣະອົງຈະບໍ່ກ່າວແຕ່ລຳພັງຂອງພຣະອົງເອງ ແຕ່ພຣະອົງຊົງໄດ້ຍິນສິ່ງໃດກໍຈະຊົງກ່າວສິ່ງນັ້ນ ແລະຈະຊົງປະກາດໃຫ້ທ່ານທັງຫລາຍຮູ້ເຖິງສິ່ງເຫລົ່ານັ້ນທີ່ຈະເກີດຂຶ້ນ."

- ຊາວຄຣິສຕຽນໄດ້ຮັບຮູ້ວ່າ ຜູ້ທີ່ພຣະເຢຊູຄຣິດກ່າວເຖິງນັ້ນ ຄືພຣະວິນຍານບໍຣິສຸດ ແຕ່ພວກມຸສລິມກ່າວວ່າ ແມ່ນທ່ານມູຮັມເມັດນັ້ນເອງ.

- ໃນປັດຈຸບັນ 1 ໃນ 6 ຂອງພົລເມືອງຂອງໂລກແມ່ນ ມຸສລິມ. 1400 ປີ ຫລັງຈາກມູຮັມເມັດໄດ້ຕາຍໄປແລ້ວ. ປະເທດນັບຖືອິສລາມໄດ້ກາຍເປັນປະເທດທີ່ຍິ່ງໃຫຍ່ ທາງດ້ານເສດຖະກິດ ສັງຄົມ ແລະການເຊື່ອຖື. ຄວາມຍິ່ງໃຫຍ່ນີ້ໄດ້ເປັນໄປຕາມການສັນຍາຂອງພຣະເຈົ້າຕໍ່ ນາງຮາກາ ແລະລູກຊາຍ (ອິສມາເອນ) ຜູ້ທີ່ເປັນຕົ້ນກຳເນີດຂອງຊາວອາຣັບທັງຫລາຍ. ການຮຽນຮູ້ກ່ຽວກັບ ອິສລາມນີ້ຈະແຍກນາມການຮຽນຮູ້ເຖິງກົກເຄົ້າຂອງຊາວອາຣັບບໍ່ໄດ້. ດັ່ງນັ້ນ ຂ້າພະເຈົ້າຈະນຳມາສເນີທ່ານກ່ຽວກັບຄວາມເປັນມາຂອງອາຣັບ ໃນທ້າຍຂອງບົດຮຽນກ່ຽວກັບ ສາສນາອິສລາມນີ້.

- ໃນໂລກນີ້ໄດ້ມີສະຖິຕິຂອງຊາວມຸສລິມດັ່ງນີ້: ອິນໂດເນເຊັຽ 150 ລ້ານຄົນ. ປາກີສຖານ, ອີຣານ, ແລະອິນເດັຽ ມີ 82 ລ້ານຄົນ. ຈີນ 40 ລ້ານຄົນ. ໂຊວຽດໄດ້ມີການວາງສະຖິຕິໄວ້ວ່າ ໃນປີ2000 ເຄິ່ງນຶ່ງຂອງເດັກນ້ອຍທີ່ຈະເກີດມານັ້ນ ມີພໍ່ແມ່ ເປັນມຸສລິມ. ນີ້ເຮົາຈະເຫັນວ່າ ພວກມຸສລິມ ບໍ່ໄດ້ຫມາຍເຖິງວ່າຕ້ອງເປັນພວກອາຣັບ ເພາະສາມສ່ວນສີ່ຂອງມຸສລິມຢູ່ນອກດິນແດນອາຣັບ.

## 4/ ການຂັດແຍ່ງໃນຫມູ່ມຸສລິມ:

- ການຕາຍຂອງທ່ານ ມູຮັມເມັດ ໃນເດືອນ 6 ວັນທີ 8 ປີ 632 AD. ໄດ້ສ້າງຄວາມກະທົບກະເທືອນແກ່ຊາວມຸສລິມຫລາຍທີ່ສຸດ. ທັງນີ້ເພາະ ມູຮັມເມັດ ບໍ່ມີລູກຊາຍທີ່ຈະສືບທອດຕຳແຫນ່ງແລະເພິ່ນເອງກໍບໍ່ໄດ້ຂຽນກົດລະບຽບກ່ຽວກັບການສືບທອດຕຳແຫນ່ງນີ້ແຕ່ປະການໃດ.

- ເມັຽຄົນທຳອິດຂອງທ່ານ ໄດ້ໃຫ້ລູກຊາຍສອງຄົນຄື: ກາຊິມ, ແລະອັບດູລາ ພ້ອມນັ້ນຍັງມີລູກສາວອີກສີ່ຄົນຄື: ຊາຍນາບ, ຣຸຄນາຍຢາ, ຟາຕິມາ, ແລະອັມກຸລຕັມ, ລູກທັງຫມົດໄດ້ເສັຽຊີວິດແຕ່ຍັງເຍົາໄວຢູ່ ຄົງເຫລືອແຕ່ ນາງຟາຕິມາ ຊຶ່ງເປັນຍິງທີ່ງາມທີ່ສຸດຄົນດຽວເທົ່ານັ້ນ. ລູກຂອງເມັຽຄົນອື່ນໆກໍໄດ້ເສັຽຊີວິດໄປຫມົດ. ດັ່ງນັ້ນເຊື້ອສາຍປັດຈຸບັນຂອງທ່ານມູຮັມເມັດ ຈຶ່ງມີມາຈາກນາງ ຟາຕິມາພຽງຜູ້ດຽວ. ເຊື້ອສາຍຂອງມູຮັມເມັດໄດ້ເອີ້ນຊື່ວ່າ "ພວກຊາຣິຟ ແລະ ພວກສາຍຢິດ". ຜົວຂອງນາງຟາຕິມາຊື່ວ່າ ທ່ານອາລີ ອິມ ອາລີ ຕາລິບ. ຜູ້ກ່ຽວເປັນລູກລ້ຽງຂອງທ່ານມູຮັມເມັດເອງ. ເຂົາມີລູກຊາຍນຳກັນສອງຄົນຄື: ຮາເຊນ ແລະຣຸສເຊນ. ເດັກທັງສອງນີ້ໄດ້ເປັນທີ່ຮັກແພງທີ່ສຸດຂອງທ່ານ ມູຮັມເມັດ. ເວລາທີ່ທ່ານມູຮັມເມັດຕາຍ ພວກເຂົາມີອາຍຸ ຫົກປີ ແລະ ເຈັດປີເທົ່ານັ້ນ.

- ການຕາຍຂອງທ່ານມູຮັມເມັດ ມີບາງພວກໄດ້ສເນີເອົາທ່ານ ອາລີ ຜູ້ເປັນເຂີຍນັ້ນຂຶ້ນຕຳແຫນ່ງ ແຕ່ບາງພວກໄດ້ເຫັນດີເອົາບຸກຄົນທີ່ມີຊື່ສຽງໃນຕະກູນ ໂກຣິສ ມາເປັນຜູ້ນຳ (ຕະກູນ ໂກຣິສ ເປັນພວກທີ່ເກັບພາສີ ຮັກສາໂບດ ແລະຮັ່ງມີ ຢູ່ເມືອງເມັກກາ ຊຶ່ງເປັນບ່ອນເກີດຂອງ ທ່ານມູຮັມເມັດ). ສຸດທ້າຍພວກເຂົາໄດ້ເອົາທີ່ປຶກສາ ແລະທັງເປັນພໍ່ເຖົ້າຂອງທ່ານມູຮັມເມັດເອງຂຶ້ນແທນ. ແລະທ່ານໄດ້ຂຽນກົດລະບຽບໃນການສືບທອດຜູ້ນຳຂຶ້ນ ແລະໄດ້ປະຕິບັດຕາມກັນມາຈົນເຖິງປີ 1924 ຊຶ່ງເປັນໄລຍະຣຸກຮານຂອງພວກ ເຕີກີ (Turkey) ເຂົ້າດິນແດນອາຣັບ. ຕໍ່ມາ ທ່ານ "ໂອມາກ ອິນ ອານກັດຕາບ" ໄດ້ເປັນຜູ້ນຳ ແລະຈາກນັ້ນກໍມີການຂະຫຍາຍດິນແດນຄັ້ງໃຫຍ່ໂດຍໃສ່ຊື່ວ່າ "ອັລຮູ ອັຄບາ" ຊຶ່ງແປໄດ້ຄວາມວ່າ "ພຣະເຈົ້າຍິ່ງໃຫຍ່" ເຮົາມັກເອີ້ນກັນໃນປັດຈຸບັນນີ້ວ່າ "ສົງຄາມສາສນາ" ຫລື "ໂຮລີວໍ". ກອງທັບອິສລາມໄດ້ບຸກໂຈມຕີ ແລະ

ຂະຫຍາຍດິນແດນໄດ້ຢ່າງວ່ອງໄວ ໃນປີ 635-36 ຍຶດ ຊີເຣັຽ ແລະປາແລສຕາຍ, ປີ 641 ຍຶດ ເອຢິບ ແລະອີຣ່ານ, ປີ 637 ຍຶດ ອີຣັກ, ປີ 638 ຍຶດ ກຸງເຢຣູຊາເລັມ ແລະເອີ້ນຊື່ເມືອງນີ້ວ່າ "ອານກຸດ" ແປວ່າ "ເມືອງບໍຣິສຸດ". ເມືອງນີ້ຖືກຖືວ່າ ເປັນເມືອງສັກສິດອັນດັບທີ່ສາມຂອງສາສນາອິສລາມ ເພາະເຂົາຖືວ່າເປັນເມືອງທີ່ພຣະເຈົ້າຈະຊົງລົງມາຮັບເອົາມະນຸດໃນບັ້ນທ້າຍຂອງໂລກ. ນອກນີ້ຍັງເຊື່ອກັນວ່າເປັນບ່ອນທີ່ ທ່ານອັບຣາຮາມໄດ້ຖວາຍລູກຊາຍໃຫ້ແກ່ພຣະເຈົ້າ ຊຶ່ງຄຳພີຄຣິສຕຽນໄດ້ບອກວ່າ ທ່ານອັຣາຮາມໄດ້ຖວາຍອີຊາກ ລູກຂອງນາງຊາຣາຍ ເມັຽຜູ້ຖືກຕ້ອງຕາມກົດໝາຍ ແຕ່ຊາວມຸສລິມເຂົ້າໃຈວ່າ ອັບຣາຮາມໄດ້ຖວາຍ ອິສມາເອນ ລູກຊາຍຂອງນາງຮາກາ ເມັຽນ້ອຍຂອງອັບຣາຮາມນັ້ນ. ຄວາມຂັດແຍ້ງລະຫວ່າງ ອິສຣາເອນ ຜູ້ເປັນເຊື້ອສາຍຂອງນາງຊາຣາຍ ແລະອາຣັບ ຜູ້ເປັນເຊື້ອສາຍຂອງນາງຮາກາ ຈະນຳມາສເນີທ່ານຕໍ່ໄປ. ເມືອງສັກສິດອີກສອງເມືອງໄດ້ແກ່ ເມືອງເມັກກາ ບ້ານເກີດຂອງ ທ່ານມູຮັມເມັດ ແລະເມືອງ ເມດີນາ ບ່ອນຝັງສົບຂອງທ່ານ ມູຮັມເມັດ.

- ທ່ານ ໂອມາກ ເປັນຜູ້ນຳໃນເວລານັ້ນ, ໄດ້ຖືກລອບສັງຫານໂດຍຂ້າທາດຄົນອີຣ່ານ. ທ່ານ ອາລີ ລູກເຂີຍຂອງທ່ານ ມູຮັມເມັດ ກໍຖືກສເນີຊື່ຂຶ້ນມາເປັນຜູ້ນຳອີກ ແຕ່ຖືກປະຕິເສດ.

- ທ່ານ ໂອດມານ ໄດ້ຖືກເລືອກເປັນຜູ້ແທນ ປີ 644-56 ຄຳພີ "ຄໍຣານ" ໄດ້ຖືກສ້າງຂຶ້ນສຳເຣັດ.*ານ ໂອດມານ ໄດ້ຖືກລອບສັງຫານໃນປີ 656. ການຕາຍຂອງທ່ານ ໄດ້ສ້າງຄວາມຂັດແຍ້ງຢ່າງຮ້າຍແຮງໃນໝູ່ມຸສລິມ.

- ທ່ານ ອາລີ ສາມາດຂຶ້ນມາເປັນຜູ້ນຳໄດ້ໃນຄັ້ງນີ້ ແຕ່ໄດ້ຖືກລອບສັງຫານ. ຫລານຂອງທ່ານ ໂອດມານ ຊື່ ມົວວີຢາ ໄດ້ທຳການຍຶດອຳນາດການນຳ ຈາກບັນດາລູກໆຂອງທ່ານ ອາລີ.

- ເຮົາຈະເຫັນວ່າ ບັນດາຜູ້ນຳຂອງອິສລາມ ສ່ວນຫລາຍຈະຖືກລອບຄາຕກັມ ການຂັດແຍ້ງໄດ້ເກີດຂຶ້ນໂດຍທົ່ວໄປ. ພວກທີ່ນັບຖືຜູ້ນຳຕາມເຊື້ອສາຍຂອງທ່ານ ມູຮັມເມັດ ໄດ້ເອີ້ນຕົນເອງວ່າ "ກຸ່ມອາລີ" (Shiat Ali) ຫລືເອີ້ນສັ້ນໆວ່າ ພວກ "ນິກາຍ ຊີໄອ້" (Shiites ຫລື Shiahs). ມີກຸ່ມນຶ່ງທີ່ຖືວ່າ ເປັນພວກທີ່ເດີນຕາມເສັ້ນທາງຂອງທ່ານ ມູຮັມເມັດຢ່າງຖືກຕ້ອງ ແລະມີການເລືອກເອົາຜູ້ນຳ ໂດຍອີງໃສ່ຄວາມຮູ້ ຄວາມສາມາດຂອງບຸກຄົນ ພວກນີ້ເອີ້ນຊື່ວ່າ "ນິກາຍ ຊຸນນີ" (Sunni). ນິກາຍ ຊຸນນີ ໄດ້ມີການຂະຫຍາຍຕົວຢ່າງວ່ອງໄວ ແຕ່ນິກາຍ ຊີໄອ້ກັບເຊື່ອມໂຊມລົງ. ປີ 680 ທ່ານ ຮຸສເຊນ ລູກຊາຍຂອງທ່ານ ອາລີ ພ້ອມດ້ວຍຍາດຕິພີ່ນ້ອງຈຳນວນ 72 ຄົນ ໄດ້ຖືກລອບຄາຕກັມ ໂດຍຖືກສັງຫານໝູ່ທີ່ເມືອງກາບາລາ ໃນປະເທດອີຣັກປັດຈຸບັນ. ບັນຫານີ້ໄດ້ເຮັດໃຫ້ນິກາຍຊີໄອ້ຄິດວ່າ ເປັນການກະທຳຂອງຝ່າຍກົງກັນຂ້າມ. ດັ່ງນັ້ນ ພວກນີ້ຈຶ່ງຝັງຄວາມແຄ້ນໄວ້ຕລອດມາ ແລະຄວາມບໍ່ສງົບສຸກກໍເກີດຂຶ້ນໃນໝູ່ອິສລາມຕລອດມາ. ແຕ່ນັ້ນມາຄວາມແຕກຕ່າງໃນດ້ານທິສດີ ການປະຕິບັດ ຂອງສອງນິກາຍນີ້ໄດ້ເກີດຂຶ້ນເຖິງພື້ນຖານແຫ່ງຄວາມເຊື່ອເໝືອນກັນກໍຕາມ. ປີ 1990 ສະຖິຕິໂລກໄດ້ບອກວ່າ ຊາວມຸສລິມໃນໂລກມີປະມານ ແປດລ້ານໃນນັ້ນ 85% ແມ່ນນິກາຍ ຊຸນນີ ແລະ 15% ແມ່ນພວກນິກາຍ ຊີໄອ້.

## 5/ ຄຳພີຂອງອິສລາມ:

- ຄຳພີເອີ້ນຊື່ວ່າ "ຄໍຣານ" ຖືກຂຽນຂຶ້ນສຳເຣັດໃນປີ 656. ມີ 114 ພາກ ເອີ້ນຊື່ວ່າ "ຊູຣາ". ຄຳພີໄດ້ຂຶ້ນຕົ້ນດ້ວຍປະໂຍກຄຳເວົ້າດັ່ງນີ້, "ບິສຊັມ ອິລາ ອຽກຣ໌-ຣາມັນ ອຽກຣ໌-ຣາບິມ" (Bism' illah ir-Rahman ir-Rabim) ແປວ່າ "ໃນນາມແຫ່ງ ອັລາ ຄວາມເມດຕາປານີ ຄວາມອິດູຕົນສົງສານ". ຄຳພີນີ້ປະພັນໂດຍທ່ານ ມູຮັມເມັດ ແລະໄດ້ຖືກຖືວ່າເປັນພຣະຄຳຂອງພຣະເຈົ້າ.

## 6/ ຄວາມເປັນມາຂອງອາຣັບ ແລະການຂັດແຍ້ງກັບອິສຣາເອນ.

### - ຄວາມເປັນມາຂອງອາຣັບ ແລະອິສຣາເອນ:

- ໃນໂລກປັດຈຸບັນ ໄດ້ມີເຫດການນຶ່ງທີ່ສ້າງຄວາມສັບສົນໃຫ້ແກ່ມະນຸດ ນັ້ນຄືສົງຄາມ ແລະການຂັດແຍ້ງທີ່ບໍ່ມີທີ່ສິ້ນສຸດຂອງຊາວອາຣັບ ແລະອິສຣາເອນ. ຂ້າພະເຈົ້າໄດ້ຄົ້ນຄວ້າແລະຊອກຫາສາເຫດຄວາມເປັນມາຂອງຄົນສອງເຜົ່ານີ້ມາສເນີທ່ານ ໃນປຶ້ມເຫລັ້ມນີ້. ເພື່ອທ່ານຈະເກັບກຳໄດ້ບາງບັນຫາທີ່ເປັນປໂຍດ, ແຕ່ຂ້າພະເຈົ້າເອງ ກໍອາດບໍ່ຮູ້ເລິກເຊິ່ງ ແຕ່ອີງໃສ່ຕຳລາທີ່ໄດ້ຮຽນມາກໍພໍທີ່ຈະສເນີພີ່ນ້ອງດັ່ງນີ້:

- ກ່ອນອື່ນ ໃຫ້ທ່ານທັງຫລາຍຊາບວ່າ ທັງອາຣັບ ແລະອິສຣາເອນ ໄດ້ມີປະຫວັດສາດ ການເປັນມາໃນດ້ານເຊື້ອສາຍແບບດຽວກັນ ໂດຍມີການໄລ່ເຊື້ອສາຍມາຈາກກົກເຄົ້າຂອງມະນຸດຄື ອາດາມ, ໂນເອ, ແລະອັບຣາຮາມ.

- ຫລັງຈາກອັບຣາຮາມແລ້ວ ພວກເຂົາໄດ້ມີການບັນທຶກກ່ຽວກັບເຊື້ອສາຍນີ້ບໍ່ຄືກັນ. ໃນພຣະຄຳພີ ໄດ້ບອກວ່າ ທ່ານອັບຣາຮາມໄດ້ມີເມັຽຄົນນຶ່ງຊື່ ນາງຊາຣາຍ. ພຣະຜູ້ເປັນເຈົ້າໄດ້ສັນຍາກັບອັບຣາຮາມໃນ

**ປະຖົມມະການ 12:1-3** ຄັນຕໍ່ມາ ພຣະຜູ້ເປັນເຈົ້າໄດ້ຊົງບອກແກ່ອັບຣາຮາມວ່າ "ຈົ່ງອອກຈາກປະເທດຂອງເຈົ້າ ຈາກຍາດພີ່ນ້ອງແລະຈາກບ້ານຂອງເຈົ້າແລ້ວໄປໃນປະເທດທີ່ເຮົາຈະບອກເຈົ້າ ເຮົາຈະໃຫ້ເຈົ້າມີເຊື້ອສາຍຫລາຍຂຶ້ນແລ້ວເກີດເປັນຊົນຊາດໃຫຍ່ ເຮົາຈະອວຍພອນໃຫ້ເຈົ້າ ເປັນຜູ້ມີຊື່ສຽງແລະຜູ້ອື່ນຈະໄດ້ຮັບພອນຍ້ອນເຈົ້າ. ເຮົາຈະອວຍພອນຜູ້ທີ່ອວຍພອນເຈົ້າ ແຕ່ເຮົາຈະສາບແຊ່ງຜູ້ທີ່ສາບແຊ່ງເຈົ້າ ທຸກໆຊົນຊາດໃນໂລກຈະຂໍໃຫ້ເຮົາອວຍພອນພວກເຂົາ ເຫມືອນດັ່ງເຮົາໄດ້ອວຍພອນໃຫ້ພວກເຈົ້າ"

- ຄັນຕໍ່ມາ ທ່ານ ອັບຣາຮາມພ້ອມຄອບຄົວ ກໍອອກຈາກບ້ານເມືອງໄປຕາມຄຳສັ່ງຂອງພຣະເຈົ້າ. ເວລານັ້ນ ຫລານຊາຍຜູ້ນຶ່ງຊື່ ໂລດ ກໍໄດ້ໄປນຳ. ທ່ານໄດ້ອາສັຍຢູ່ດິນແດນການາອານ ແລະໂລດຫລານຊາຍໄດ້ຢູ່ເມືອງໂຊໂດມ. (ເມືອງທີ່ພຣະເຈົ້າທຳລາຍດ້ວຍໄຟ ແຕ່ໂລດແລະລູກບໍ່ໄດ້ຖືກທຳລາຍ ເພາະອັບຣາຮາມໄດ້ຂໍຮ້ອງພຣະຜູ້ເປັນເຈົ້າ ດັ່ງນັ້ນ ໂລດຈຶ່ງມີເຊື້ອສາຍສືບຕໍ່ມາ). ຕາມທີ່ພຣະເຈົ້າສັນຍາຈະໃຫ້ອັບຣາຮາມ ມີເຊື້ອສາຍຫລາຍນັ້ນ ເກີດເປັນບັນຫາຂ້ອງໃຈໃນເມັຽຂອງເພິ່ນ ເພາະເວລານັ້ນເພິ່ນມີອາຍຸເກົ້າສິບປີ ປະຈຳເດືອນກໍຢຸດແລ້ວ. ເຫັນແບບນີ້ ນາງຊາຣາຍ ຈຶ່ງສເນີ ອັບຣາຮາມໃຫ້ເອົາຄົນໃຊ້ຂອງນາງທີ່ເປັນຊາວເອຢິບນັ້ນມາເປັນເມັຽເພື່ອຈະມີລູກສືບເຊື້ອສາຍ. ສຸດທ້າຍຍິງຄົນໃຊ້ຊື່ວ່າ ນາງຮາກາກໍມີລູກ ແລະບໍ່ນານນາງຊາຣາຍກໍມີລູກເຊັ່ນກັນ. ລູກຊາຍຂອງຍິງຄົນໃຊ້ນັ້ນເອີ້ນຊື່ວ່າ ອິຊມາເອນ ແລະລູກຊາຍຂອງນາງຊາຣາຍ (ຕໍ່ມາປ່ຽນຊື່ມາເປັນ ຊາຣາ) ຊື່ ອີຊາກ. ນາງຮາກາຍິງຄົນໃຊ້ຈຳເປັນຕ້ອງພາລູກອອກຈາກຄອບຄົວ ແຕ່ອັບຣາຮາມໄດ້ຂໍຮ້ອງການເບິ່ງແຍງຈາກພຣະເຈົ້າ.

**ປະຖົມມະການ 17:15-22** ພຣະເຈົ້າຊົງກ່າວແກ່ອັບຣາຮາມອີກວ່າ "ເຈົ້າບໍ່ຕ້ອງເອີ້ນເມັຽຂອງເຈົ້າວ່າຊາຣາຍອີກຕໍ່ໄປ ບັດນີ້ຊື່ຂອງນາງແມ່ນຊາຣາ ເຮົາຈະອວຍພອນໃຫ້ນາງ ແລະຈະໃຫ້ເຈົ້າມີລູກຊາຍທີ່ເກີດຈາກນາງ ເຮົາຈະອວຍພອນໃຫ້ນາງເປັນມານດາຂອງປະຊາຊາດທັງຫລາຍ ແລະກະສັດທັງຫລາຍອີງຈະມາຈາກເຊື້ອສາຍຂອງນາງ" ອັບຣາຮາມກົ້ມຂາບລົງຍິ້ມຫົວໃນໃຈວ່າ "ຄົນອາຍຸໄດ້ຮ້ອຍປີແລ້ວຈະມີລູກໄດ້ຈັ່ງໃດ?" ແລະຊາຣາອາຍຸກໍໄດ້ເກົ້າສິບປີແລ້ວຈະມີລູກໄດ້ບໍ່? ອັບຣາຮາມທູນຕໍ່ພຣະເຈົ້າວ່າ "ຂ້ານ້ອຍຂໍພຣະອົງປົກປ້ອງຮັກສາ ອິຊມາເອນ ໃຫ້ລາວມີຊີວິດຫຢູ່ທ້ອນ" ແຕ່ພຣະເຈົ້າຊົງກ່າວແກ່ເພິ່ນວ່າ "ເຈົ້າເຂົ້າໃຈຜິດເຈົ້າຈະໄດ້ລູກຊາຍຈາກຊາຣາເມັຽຂອງເຈົ້າ ແລະຈົ່ງໃສ່ຊື່ເດັກນັ້ນວ່າອີຊາກ ເຮົາຈະຮັກສາຄຳຫມັ້ນສັນຍາຂອງເຮົາກັບລາວແລະເຊື້ອສາຍຂອງລາວ ເປັນຄຳຫມັ້ນສັນຍາອັນຕລອດໄປເປັນນິດ ເຈົ້າໄດ້ຂໍໃຫ້ເຮົາປົກປັກຮັກສາ ອິຊມາເອນ ນີ້ແມ່ນສິ່ງທີ່ເຮົາຈະກະທຳກັບລາວແລະເຊື້ອສາຍຂອງລາວຄືເຮົາຈະອວຍພອນໃຫ້ລາວມີລູກຫລານແລະເຊື້ອສາຍມາກມາຍກ່າຍກອງ ລາວຈະເປັນພໍ່ຂອງເຈົ້າຊາຍສິບສອງອົງ ແລະເຊື້ອສາຍຂອງລາວຈະເປັນປະເທດອັນຍິ່ງໃຫຍ່ ເຮົາຈະຮັກສາຄຳຫມັ້ນສັນຍາຂອງເຮົາກັບອີຊາກ ລູກຊາຍຂອງເຈົ້າຜູ້ຈະເກີດຈາກນາງຊາຣາໃນປີຫນ້າລະຫວ່າງລະດູນີ້" ເມື່ອພຣະເຈົ້າກ່າວຕໍ່ອັບຣາຮາມຫມົດແລ້ວ ພຣະອົງກໍສະເດັດຈາກໄປ."

- ໃນພຣະຄຳພີນີ້ ເຮົາເຫັນວ່າ ເຊື້ອສາຍຂອງນາງຮາກາ ແລະນາງຊາຣາ ຈະຍິ່ງໃຫຍ່ແລະແຜ່ຂະຫຍາຍ ແຕ່ພວກເຂົາຈະບໍ່ຖືກຕ້ອງປອງກັນ ເພາະຄວາມຂັດແຍ່ງພາຍໃນຄອບຄົວເອງ. ຫລັງຈາກນາງຊາຣາໄດ້ອອກລູກມາແລ້ວ ນາງຮາກາໄດ້ຖືກຂັບໄລ່ອອກໄປຈາກຄອບຄົວ.

## - ອາຣັບ ຫຼື ອິຊມາເອນໄລທ໌ (Arab or Ishmaelite)

- ອິຊມາເອນໄດ້ມີລູກສິບສອງຄົນຕາມທີ່ພຣະເຈົ້າໄດ້ສັນຍາ ດັ່ງກ່າວໄວ້ໃນ

**ປະຖົມມະການ 25:12-16** ເຊື້ອສາຍຂອງອິຊມາເອນລູກຊາຍຂອງອັບຣາຮາມ ແລະນາງຮາກາຄົນເອຢິບ ຊຶ່ງເປັນສາວໃຊ້ນາງຊາຣາມີດັ່ງນີ້ ຊື່ລູກຊາຍຂອງອິຊມາເອນຕາມລຳດັບກຳເນີດຄື ເນບາໂຢດລູກກົກ ຕໍ່ມາເກດາ ອັດເບເອນ ມິບຊາມ ມິຊມາ ດູມາ ມັດສາ ຮາດັດ ເຕມາ ເຢຕຸຣະ ນາຟິດແລະເກເດມາ ຄົນເຫລົ່ານີ້ແມ່ນລູກຊາຍຂອງອິຊມາເອນ ຊຶ່ງຊື່ພວກເຂົາກາຍເປັນຊື່ບ້ານ ຊື່ບ່ອນພັກອາສັຍ ແລະຊື່ສິບສອງເຜົ່າໃນຈຳນວນເຜົ່າຕ່າງໆ"

- ມູຮັມເມັດ ເປັນເຊື້ອສາຍຂອງເກດາ. ລູກສາວຂອງອິຊມາເອນຊື່ ບາສເຊມາດ໌ (Bashemath) ໄດ້ແຕ່ງງານກັບລູກຊາຍຂອງ ທ່ານເອຊາວ ຜູ້ເປັນລູກກົກຂອງທ່ານ ອິຊາກນັ້ນເອງ. ຄູ່ກ່ຽວດອງລະຫວ່າງ ອິຊມາເອນ ແລະເອຊາວນີ້ໄດ້ມີຄວາມຄຽດແຄ້ນອັນໃຫຍ່ກັບຄອບຄົວຂອງ ອິຊາກ. ພ້ອມດຽວກັນນັ້ນ ເຊື້ອສາຍຂອງທ່ານ ໂລດ ຜູ້ເປັນຫລານຊາຍຂອງທ່ານອັບຣາຮາມ ກໍມາແຕ່ງງານກັບເຊື້ອສາຍຂອງອິຊມາເອນອີກ ດັ່ງນັ້ນ ຈຶ່ງເປັນເຫດໃຫ້ເຊື້ອສາຍຂະຫຍາຍແລະແຜ່ຜາຍຢ່າງກວ້າງຂວາງ. ເຊື້ອສາຍຂອງອິຊມາເອນ ແລະຄູ່ກ່ຽວດອງໄດ້ມາອາສັຍຢູ່ດິນແດນອາຣັບ ແລ້ວປ່ຽນຊື່ຈາກຊົນເຜົ່າອິຊມາເອນໄລທ໌ (Ishmaelite) ມາເປັນ ອາຣັບ ຊຶ່ງຫມາຍເຖິງການເອີ້ນຊື່ຂອງພວກເຂົາຕາມຊື່ຂອງດິນແດນທີ່ເຂົາອາສັຍຢູ່ນັ້ນເອງ.

## - ອິສຣາເອນ ຫລື ຢາໂຄບ: (Israel or Jacob)

- ສ່ວນເຊື້ອສາຍຂອງນາງຊາຣາ ຜູ້ເປັນເມັຽຫລວງຂອງອັບຣາຮາມມີດັ່ງນີ້: ລູກນາງຊາຣາຊື່ວ່າ ອິຊາກ ແລະອິຊາກມີເມັຽຊື່ວ່າ ນາງເຣເບກາ. ນາງເຣເບກາໄດ້ມີລູກແຝດຊື່ວ່າ ເອຊາວ ແລະຢາໂຄບ. ສອງຄົນນີ້ເວລາຢູ່ໃນທ້ອງກໍບຽດສຽດກັນຊຶ່ງພຣະເຈົ້າໄດ້ບອກວ່າ ສອງອ້າຍນ້ອງນີ້ຈະກາຍເປັນສັດຕູກັນໃນອານາຄົດ. ເອຊາວຜູ້ເປັນອ້າຍມີຄວາມເກັ່ງກ້າທາງດ້ານການລ່າເນື້ອ ແລະມີອາຫານມາໃຫ້ພໍ່ກິນເລື້ອຍໆ. ດັ່ງນັ້ນເອຊາວໄດ້ເປັນທີ່ຮັກຂອງພໍ່ຫລາຍ ສ່ວນຢາໂຄບເປັນຄົນລະອຽດອ່ອນສຸພາບ ເປັນຄົນມັກຢູ່ບ້ານແລະໃກ້ຊິດກັບຄອບຄົວ ພ້ອມທັງເປັນທີ່ໂປດປານຂອງແມ່. ມື້ນຶ່ງ ເອຊາວກັບມາຈາກລ່າເນື້ອດ້ວຍຄວາມຫິວກະຫາຍ ເພາະບໍ່ໄດ້ເນື້ອໃນມື້ນັ້ນ ເວລາຍ່າງກາຍມາບ້ານໄດ້ເຫັນຢາໂຄບ ຜູ້ເປັນນ້ອງຊາຍຕົ້ມຫມາກຖົ່ວຢູ່ກໍເລີຍຂໍກິນນຳ ແຕ່ຢາໂຄບໄດ້ໃຫ້ຂໍ້ແມ້ແກ່ອ້າຍວ່າ ຈະຕ້ອງຂາຍສິດໃນການເປັນອ້າຍນັ້ນໃຫ້ແກ່ເພິ່ນເພື່ອແລກກັບຫມາກຖົ່ວຖ້ວຍນຶ່ງ ເອຊາວກໍຍອມ. ດັ່ງນັ້ນຄວາມເປັນອ້າຍຂອງເອຊາວຕໍ່ຢາໂຄບກໍຫມົດໄປ.ພຣະຄຳພີໄດ້ກ່າວໄວ້ດັ່ງນີ້:

**ປະຖົມມະການ 25:22-33** "ເມື່ອນາງຖືພາຢູ່ນັ້ນ ລູກຝາແຝດໄດ້ບຽດສຽດກັນຢູ່ໃນທ້ອງ ນາງຈຶ່ງເວົ້າວ່າ "ຖ້າຫາກເປັນເຊັ່ນນີ້ ເປັນຫຍັງຂ້ອຍຈຶ່ງຢາກມີລູກ?" ແລ້ວນາງຈຶ່ງໄປອ້ອນວອນກາບທູນຕໍ່ພຣະເຈົ້າກ່ຽວກັບເລື່ອງນີ້ ພຣະຜູ້ເປັນເຈົ້າຊົງກ່າວກັບນາງວ່າ: "ເດັກສອງຄົນທີ່ຢູ່ໃນທ້ອງຂອງເຈົ້າ ຈະເກີດເປັນປະຊາຊົນສອງປະເທດຕໍ່ສູ້ກັນ ຜູ້ນຶ່ງຈະແຂງແຮງກວ່າອີກຜູ້ນຶ່ງ ອ້າຍຈະຮັບໃຊ້ນ້ອງ" ຄັນຢູ່ຕໍ່ມາ ນາງອອກລູກຝາແຝດສອງຄົນ ລູກຊາຍຜູ້ອອກກ່ອນແດງແລະມີຂົນເຕັມຕົວເຫມືອນເສື້ອທີ່ເຮັດດ້ວຍຂົນສັດ ດ້ວຍເຫດນີ້ເພິ່ນຈຶ່ງເອີ້ນລາວວ່າ ເອຊາວ ເມື່ອນ້ອງລາວເກີດມາມືຈັບສົ້ນນ່ອງຂອງເອຊາວໄວ້ ສະນັ້ນເພິ່ນຈຶ່ງເອີ້ນລາວຢາໂຄບ ເມື່ອລູກຝາແຝດທັງສອງເກີດ ອິຊາກອາຍຸໄດ້ຫົກສິບປີແລ້ວ. ເມື່ອເດັກນ້ອຍທັງສອງເຕີບໂຕຂຶ້ນມາ ເອຊາວໄດ້ກາຍເປັນນາຍພານທີ່ເກັ່ງກ້າແລະຊຳນານ ລາວເປັນຄົນບໍ່ມັກຢູ່ເຮືອນ ສ່ວນຢາໂຄບເປັນຄົນສຸຂຸມແລະມັກຢູ່ແຕ່ເຮືອນ ອິຊາກຮັກເອຊາວເພາະວ່າໄດ້ກິນເນື້ອທີ່ລາວຫາມາໄດ້ ສ່ວນນາງເຣເບກາຮັກຢາໂຄບ. ມື້ນຶ່ງ ເມື່ອຢາໂຄບກຳລັງເຮັດແກງຢູ່ ພໍດີເອຊາວກັບມາແຕ່ລ່າເນື້ອ ລາວຫິວຫລາຍຈຶ່ງເວົ້າກັບຢາໂຄບວ່າ "ຂ້ອຍຂໍກິນແກງຫມາກຖົ່ວແດງເຈົ້າຈັກຄຳແດ່ຖ້ອນ ຂ້ອຍຫິວຈະຕາຍຢູ່ແລ້ວ" (ດ້ວຍເຫດຜົນດັ່ງກ່າວນີ້ ເພິ່ນຈຶ່ງເອີ້ນເອຊາວວ່າ ເອໂດມ) ແຕ່ຢາໂຄບຕອບວ່າ "ຂ້ອຍຈະໃຫ້ເຈົ້າກິນ ຖ້າເຈົ້າຫາກຂາຍສິດທິອ້າຍກົກໃຫ້ຂ້ອຍ" ເອຊາວເວົ້າວ່າ "ເອົາລະ! ຂ້ອຍຫິວໃກ້ຈະຕາຍຢູ່ແລ້ວ ສິດທິອ້າຍກົກຈະມີປະໂຍດຫຍັງແກ່ຂ້ອຍ" ຢາໂຄບຈຶ່ງເວົ້າວ່າ "ສາບານກ່ອນແມ ວ່າເຈົ້າຈະມອບສິດທິອ້າຍກົກໃຫ້ຂ້ອຍ" ເອຊາວຈຶ່ງສາບານແລ້ວຂາຍສິດທິອ້າຍກົກຂອງຕົນໃຫ້ຢາໂຄບ"

- ການຂາຍສິດທິອ້າຍກົກນີ້ ໄດ້ມີບັນຫາໃນພາຍລຸນຄື ຕາມປະເພນີແລ້ວ ຜູ້ເປັນພໍ່ຈະໃຫ້ພອນແກ່ລູກກ່ອນຕາຍ, ເວລານັ້ນ ອິຊາກເຖົ້າແກ່ຫລາຍແລ້ວ ແລະຕາບໍ່ເຫັນຮຸ່ງຈຶ່ງເອີ້ນເອຊາວມາບອກວ່າ ໃຫ້ລາວໄປລ່າເນື້ອມາໃຫ້ກັນໃນມື້ນັ້ນ ແລ້ວພໍ່ຈະໃຫ້ພອນແກ່ລູກຄັ້ງສຸດທ້າຍຊຶ່ງເປັນຄັ້ງສຳຄັນທີ່ສຸດ. ເອຊາວກໍອອກໄປລ່າເນື້ອທັນທີ ແຕ່ການບອກຂອງອິຊາກນັ້ນນາງເຣເບກາໄດ້ຍິນ ກໍວາງແຜນໃຫ້ຢາໂຄບເອົາອາຫານມາໃຫ້ອິຊາກກິນ ພ້ອມທັງເອົາຂົນແກະມາພັນແຂນໃຫ້ ເພື່ອຜູ້ເປັນພໍ່ວຈະລູບຄຳເບິ່ງ ເມື່ອຮູ້ສຶກວ່າມີຂົນກໍຈະເຂົ້າໃຈວ່າແມ່ນເອຊາວ ແລ້ວເພິ່ນກໍຈະອວຍພອນບັ້ນສຸດທ້າຍນັ້ນໃຫ້ຢາໂຄບ ຄວາມເປັນມາກ່ຽວກັບເລື່ອງນີ້ໄດ້ບັນທຶກໄວ້ໃນພຣະຄຳພີ

**ປະຖົມມະການ 27:1-10** ອິຊາກເຖົ້າແກ່ຫລາຍຈົນຕາເພິ່ນບໍ່ເຫັນຮຸ່ງ ເພິ່ນເອີ້ນເອຊາວລູກຊາຍກົກມາແລ້ວເວົ້າວ່າ "ລູກເອີຍ" ລາວຈຶ່ງຕອບວ່າ "ໂດຍ ຂ້ານ້ອຍ" ອິຊາກເວົ້າຕໍ່ໄປວ່າ "ເຈົ້າກໍເຫັນແລ້ວວ່າພໍ່ເຖົ້າຫລາຍ ແລະອາດຈະຕາຍມື້ໃດມື້ນຶ່ງໃນໄວໆນີ້ກໍໄດ້ ບັດນີ້ ຈົ່ງເອົາອາວຸດຂອງເຈົ້າຄືທະນູແລະລູກສອນ ແລ້ວເຂົ້າໄປລ່າເນື້ອໃນປ່າມາໃຫ້ພໍ່ ຈົ່ງເຮັດອາ

ຫານແຊບໆທີ່ພໍ່ມັກແລ້ວເອົາມາໃຫ້ພໍ່ກິນ ເມື່ອພໍ່ກິນອີ່ມແລ້ວພໍ່ຈະອວຍພອນໃຫ້ແກ່ເຈົ້າຄັ້ງສຸດທ້າຍກ່ອນພໍ່ຈະຕາຍ". ເມື່ອອີຊາກເວົ້າກັບເອຊາວ ນາງເຣເບກາກໍໄດ້ຍິນເຣື່ອງນັ້ນ ຄັນແລ້ວ ພໍເອຊາວອອກຈາກເມືອງໄປລ່າເນື້ອມາໃຫ້ພໍ່ ນາງເຣເບກາຈຶ່ງເວົ້າກັບຢາໂຄບວ່າ "ແມ່ໄດ້ຍິນພໍ່ເຈົ້າເວົ້າກັບເອຊາວອ້າຍຂອງເຈົ້າວ່າ ເຈົ້າຈົ່ງໄປລ່າເນື້ອ ແລ້ວເຮັດອາຫານອັນແຊບໆໃຫ້ພໍ່ ເມື່ອພໍ່ກິນອີ່ມແລ້ວ ພໍ່ຈະອວຍພອນໃຫ້ເຈົ້າຕໍ່ຫນ້າພຣະຜູ້ເປັນເຈົ້າກ່ອນພໍ່ຕາຍ ບັດນີ້ ລູກເອີຍ ຈົ່ງຟັງແລະເຮັດໃນສິ່ງທີ່ແມ່ບອກ ຈົ່ງໄປທີ່ຝູງແບ້ ແລະເອົາລູກແບ້ຕົວຕຸ້ຍໆສອງຕົວມາໃຫ້ ເພື່ອແມ່ຈະເຮັດອາຫານຢ່າງແຊບໆທີ່ພໍ່ເຈົ້າມັກແລ້ວເຈົ້າຈົ່ງເອົາອາຫານນັ້ນໄປໃຫ້ພໍ່ເຈົ້າກິນ ແລະເພິ່ນຈະອວຍພອນໃຫ້ເຈົ້າກ່ອນເພິ່ນຈະຕາຍ".

- ຢາໂຄບໄດ້ທຳຕາມ ແລະກໍໄດ້ຮັບພອນຂອງພໍ່ ສ່ວນເອຊາວເວລາກັບມາຮູ້ຈັກວ່ານ້ອງຊາຍໄດ້ຍາດຄຳພອນນັ້ນໄປແລ້ວກໍເກີດຄວາມຄຽດຮ້າຍ ແລະອາຄາດແຄ້ນຕໍ່ຢາໂຄບ ແລະສອງອ້າຍນ້ອງນີ້ກໍໄດ້ກາຍເປັນສັດຕູຕໍ່ສູ້ກັນ ເຊື້ອສາຍຂອງເອຊາວກໍບໍ່ມີການພົວພັນກ່ຽວດອງກັບເຊື້ອສາຍຂອງຢາໂຄບເລີຍ ແຕ່ໄດ້ກ່ຽວດອງກັບເຊື້ອສາຍຂອງອິຊມາເອນຜູ້ເປັນຄູ່ອາຄາດຂອງອີຊາກ. ຄັນຕໍ່ມາ ຢາໂຄບໄດ້ຖືກພຣະຜູ້ເປັນເຈົ້າປ່ຽນຊື່ມາເປັນ "ອິສຣາເອນ"

**ປະຖົມມະການ 35:9-10** ເມື່ອຢາໂຄບກັບຈາກປະເທດເມໂຊໂປຕາເມັຽ ພຣະເຈົ້າໄດ້ຊົງປາກົດຕໍ່ເພິ່ນອີກ ແລະຊົງອວຍພອນໃຫ້ເພິ່ນວ່າ "ຕໍ່ໄປນີ້ ຊື່ຂອງເຈົ້າຈະບໍ່ແມ່ນຢາໂຄບອີກ ຊື່ຂອງເຈົ້າຈະແມ່ນອິສຣາເອນ"

- ຢາໂຄບ ຫລື ອິສຣາເອນໄດ້ມີລູກຊາຍສິບສອງຄົນ ຊຶ່ງກາຍມາເປັນ ສິບສອງຕະກູນຂອງຊົນຊາດອິສຣາເອນ. ແລະພວກນີ້ບໍ່ໄດ້ມີການພົວພັນກ່ຽວດອງກັບພວກອື່ນໆ. ຄວາມຂັດແຍ່ງກັບອາຣັບທີ່ເປັນເຊື້ອສາຍດຽວກັນ ແລະຮ່ວມພໍ່ດຽວກັນໄດ້ສືບຕໍ່ມີມາດັ່ງຈະສເນີຕໍ່ໄປນີ້.

## ການຂັດແຍ່ງລະຫວ່າງ ອາຣັບ ກັບ ອິສຣາເອນ

- ເຮົາໄດ້ເຫັນເຖິງເຄົ້າກຳເນີດຂອງຄວາມຂັດແຍ່ງຂອງສອງເຜົ່ານີ້ ຊຶ່ງເຮົາເອີ້ນວ່າການຂັດແຍ່ງພາຍໃນຄອບຄົວ ແຕ່ການຂັດແຍ່ງນີ້ໄດ້ເປັນເຫດໃຫ້ທົ່ວໂລກສັບສົນ. ຝ່າຍອາຣັບຊຶ່ງມີເຊື້ອສາຍຂອງອິຊມາເອນ, ໂລດ, ແລະເອຊາວ ໄດ້ກາຍເປັນຊົນເຜົ່າໃຫຍ່. ອິສຣາເອນກໍໄດ້ຂະຫຍາຍເຊັ່ນກັນ ແຕ່ໄດ້ຖືກຖືວ່າເປັນສັດຕູໂຕຮ້າຍກາດຂອງພວກອາຣັບ.

- ທີ່ຂ້າພະເຈົ້າເວົ້າວ່າ ອາຣັບ ນັ້ນຫມາຍເຖິງເຊື້ອສາຍກ່ຽວດອງທັງຫມົດຂອງອິຊມາເອນ. ພັນທະມິດຂອງ ອິສມາເອນທີ່ຮ່ວມກັນຕໍ່ສູ້ກັບພວກອິສຣາເອນໄດ້ຖືກ່າວໄວ້ໃນພຣະຄຳ

**ເພງສັນລະເສີນ 83:3-8** "ເຂົາວາງແຜນການເລິກລັບສູ້ປະຊາກອນຂອງພຣະອົງ ເຂົາປຶກສາກັນສູ້ຜູ້ທີ່ພຣະອົງຊົງທະນຸຖະນອມ ເຂົາເວົ້າວ່າ "ມາເຖີດ ໃຫ້ເຮົາກວາດເຂົາອອກຈາກການເປັນປະຊາຊາດ ຢ່າໃຫ້ລະນຶກເຖິງຊື່ອິສຣາເອນອີກຕໍ່ໄປ" ເຂົາປອງຮ້າຍເປັນໃຈດຽວກັນ ເຂົາທຳພັນທະສັນຍາສູ້ພຣະອົງ ຄື ເຕັນຂອງເອໂດມແລະຄົນອິຊມາເອນ ໂມອາບແລະຄົນຮາກີດ ເກບານ ອັມໂມນ ແລະອາມາເລັກ ຟີລິສຕິນກັບຊາວເມືອງຕີເລ ອັສຊີເຣັຽກໍສົມທົບກັບເຂົາດ້ວຍ ເຂົາເປັນເຊື້ອສາຍຂອງໂລດ."

- ພວກຟີລິສຕິນ ແລະອາມາເລັກ ຄືພວກປາແລສຕາຍນັ້ນເອງ ແລະພວກນີ້ໄດ້ເປັນປໍຣະປັກກັບອິສຣາເອນໄດ້ຫລາຍຊົ່ວອາຍຸຄົນມາແລ້ວ. ໃນສະໄຫມຂອງທ່ານໂມເຊ ຜູ້ນຳຂອງຊົນຊາດອິສຣາເອນທີ່ພາພວກເຂົາອອກຈາກການເປັນຂ້ອຍຂ້າຂອງປະເທດອີຢິບ ໄດ້ມີການສູ້ຮົບກັບພວກອາມາເລັກ ແລະຟີລິສຕິນນີ້ຕລອດມາ ການຕໍ່ສູ້ນັ້ນກໍແມ່ນການຕໍ່ສູ້ຍາດຊິງດິນແດນນັ້ນເອງ.

- ປີ 70 AD. ສີ່ສິບປີ ຫລັງຈາກພຣະເຢຊູຄຣິດວາຍພຣະຊົນ. ຈັກກະພັດໂຣມັນ ໄດ້ເຂົ້າຍຶດຄອງທັງຫມົດແຫລມອາຣັບ. ພວກໂຣມັນໄດ້ປ່ຽນຊື່ຂອງດິນແດນທີ່ພວກຢິວ, ຊຶ່ງມາຈາກຕະກູນຂອງ ຢູດາ, ນຶ່ງໃນສິບສອງລູກຊາຍຂອງທ່ານຢາໂຄບທີ່ໄດ້ຫລຸດພົ້ນຈາກສົງຄາມລ້າງຜານ ໃນສະໄຫມຈັກກະພັດອັດຊີເຣັຽ ແລະບາບີໂລນພຸ້ນ (ລາຍລະອຽດເຊີນທ່ານຄົ້ນຄວ້າທີ່ປື້ມພຣະຄຳພີຂອງຄຣິສຕຽນ) ມາເປັນດິນແດນ "ປາແລສຕາຍ" ເພື່ອຈຸດປະສົງລຶບລ້າງຄວາມເປັນຊາດຂອງຊາດຢິວໃຫ້ຫມົດໄປ. ພວກຢິວໄດ້ແຕກນ້າງກະຈັດກະຈາຍໄປທົ່ວທີບ ແຕ່ພວກນີ້ຍັງຈື່ມເຖິງດິນແດນແຫ່ງພຣະສັນຍາຂອງເຂົາສເມີແລ້ວພະຍາຍາມທີ່ຈະກອບກູ້ດິນແດນນັ້ນຄືນ. ແຕ່ການຂັດແຍ່ງມັນເປັນເລື້ອງຂອງຄອບຄົວ ແລະຈະບໍ່ມີການສິ້ນສຸດໄດ້ເລີຍ. ພຣະຄຳພີໄດ້ກ່າວໄວ້ເຖິງສິ່ງທີ່ຈະຕ້ອງເກີດຂື້ນຈົນເຖິງສຸດປາຍແຜ່ນດິນໂລກ. ພີ່ນ້ອງທີ່ມີຂໍ້ຂ້ອງໃຈກ່ຽວກັບບັນຫາ ອາຣັບແລະອິສຣາເອນນີ້ ຂ້າພະເຈົ້າໄດ້ມີປື້ມເຫລັ້ມນຶ່ງທີ່ເວົ້າສະເພາະບັນຫານີ້ ເຊີນທ່ານຕິດຕໍ່ແລະສັ່ງຈອງໄດ້.